# ໂຮງຮຽນວັນອາທິດ

**ວັນອາທິດ ທີ 25 ກໍຣະກະດາ 2010 (7/25/2010)**

## ພລັງຂອງຄວາມສັດຊື່

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ຊາມູເອນ 24: 20-22; 26: 1-2, 7-12, 21-25

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?</u>**

ບົດຮຽນນີ້ສາມາດຊ່ວຍໃຫ້ທ່ານຮູ້ໄດ້ວ່າມີຣາງວັນໃຫ້ສໍາລັບຄວາມສັດຊື່ແລະຄວາມຈົງຮັກພັກດີຕໍ່ພຣະເຈົ້າ,ແລະມັນຍັງສາມາດຊ່ວຍທ່ານໃຫ້ມີຄໍາໝັ້ນສັນຍາວ່າຈະດໍາເນີນຊີວິດຢູ່ຢ່າງຖືກຕ້ອງ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ບົດຮຽນນີ້ແມ່ນກ່ຽວກັບດາວິດໂຍະຍານໄວ້ຊີວິດຊາອູນ, ໂດຍບໍ່ໄດ້ຄໍານຶງເຖິງເຈດຕະນາຂອງຊາອູນທີ່ຈະຂ້າລາວ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ:</u>**

ໂດຍສ່ວນຕົວແລ້ວຜູ້ໃຫຍ່ເຮົາມັກຈະຄິດຢູ່ເລື້ອຍໆວ່າ ຄວາມຖືກຕ້ອງເປັນທັມແລະການໃຫ້ຄວາມຈົງຮັກພັກດີກັບພຣະເຈົ້ານັ້ນແມ່ນບໍ່ມີຄ່າຕອບແທນອັນໃດເລີຍ.

ໃນເມື່ອເວລາຂ້າພຣະເຈົ້າຍັງເປັນເດັກນ້ອຍຢູ່. ຄະນະກິລາເບສບໍທີມໃຫຍ່ໆແມ່ນມີຄວາມໜັກແໜ້ນໃນຄວາມຈົງຮັກພັກດີເປັນອັນດັບນຶ່ງ. ໃນທຸກມື້ນີ້, ປາສຈາກມາດຕະຖານຂອງຄວາມຈົງຮັກພັກດີນັ້ນ. ການຫຼິ້ນຂອງທີມຈຶ່ງເປັນທີ່ນິຍົມຂອງແຟນໆກິລາຢ່າງຫຼວງຫຼາຍ, ນັກກິລາຜູ້ຊຶ່ງເລີ້ມຕົ້ນແລະຈົບລົງພ້ອມກັບຜົນສໍາເຣັດຂອງເຂົາທີ່ຫຼິ້ນຢູ່ໃນທີມດຽວມາໂດຍຕລອດນັ້ນແມ່ນຫາໄດ້ຍາກໃນທຸກມື້ນີ້. ແຟນໆກິລາທັງຫຼາຍມັກທີ່ຈະເຫັນຄວາມຈົ່ງຮັກພັກດີຂອງນັກກິລາທີ່ຍັງຫຼິ້ນໃນທີມນັ້ນມາໂດຍຕລອດ.

ດາວິດມີຄວາມຈົງຮັກພັກດີເໜືອກວ່າພວກເຂົາທັງໝົດ. ລາວຍັງສືບຕໍ່ໃຫ້ຄວາມນັບຖືຊາອູນເຖິງແມ່ນວ່າຊາມູເອນໄດ້ເຈີມດາວິດໃຫ້ເປັນກະສັດແລະຊາອູນມີຈິດໃຈປອງຮ້າຍດາວິດເຖິງກັບວ່າຕ້ອງການຂ້າລາວໃຫ້ຕາຍ. ລາວບໍ່ເອົາໂອກາດທີ່ລາວມີນັ້ນຂ້າຊາອູນ. ເພາະລາວເຫັນຄວາມຈົງຮັກພັກດີມີຄວາມສໍາຄັນກວ່າທີ່ຕົວລາວຖືກເລື່ອນຕໍາແໜ່ງ

**<u>ສຶກສາພຣະຄັມພີ</u>**

**1. <u>ຈິງໃຈທີ່ຈະຜິດຄໍາສັນຍາ:</u>** 1 ຊາມູເອນ 24:20-22; 26:1-2

ຊາອູນບໍ່ມີຄວາມຈົງຮັກພັກດີຕໍ່ດາວິດເຖິງແມ່ນວ່າດາວິດໄດ້ເອົາກອງກໍາລັງທະຫານຂອງລາວອອກມາຈາກການຜາບແພ້ໂກລີອາດ. ເຖິງວ່າຊາອູນມີຄວາມຕັ້ງໃຈທີ່ຈະຂ້າດາວິດ, ດາວິດຍັງໄວ້ຊີວິດຊາອູນເຖິງສອງຄັ້ງເມື່ອດາວິດມີໂອກາດທີ່ຈະຂ້າຊາອູນ(1 ຊາມູເອນ 24:1-4; 26:7-12). ທັງສອງຄືນຕ່າງກໍໄດ້ຮັບການເຈີມໃຫ້ເປັນກະສັດຈາກຊາມູເອນ, ແຕ່ພຣະເຈົ້າປະຕິເສດການເຈີມຂອງຊາອູນແຕ່ຊົງສະຖິດຢູ່ນໍາດາວິດ. ເຖິງຢ່າງໃດກໍຕາມ, ດາວິດຍັງໃຫ້ຄວາມຈົງຮັກພັກດີຕໍ່ຊາອູນນານເທົ່າທີ່ຈະນານຊົ່ວຊີວິດຂອງຊາອູນ. ເຖິງແມ່ນວ່າຊາອູນຍັງໄດ້ຕາມຫາຊອກຂ້າດາວິດ.

ຊາອູນຮູ້ແນ່ແກ່ໃຈວ່າດາວິດຈະໄດ້ເປັນກະສັດຜູ້ຕໍ່ມາ. ລາວໄດ້ຖາມດາວິດໃຫ້ຄຳໝັ້ນສັນຍາ...ໂດຍພຣະນາມຂອງອົງພຣະຜູ້ເປັນເຈົ້າວ່າເຈົ້າຈະສງວນເຊື້ອສາຍຂອງຂ້ອຍໄວ້ ເພື່ອວ່າຊື່ຂອງຂ້ອຍແລະຊື່ຄອບຄົວຂອງຂ້ອຍຈະບໍ່ຫຼົງລືມໄປໝົດສິ້ນ. ຊາອູນບໍ່ໄດ້ຮູ້ວ່າດາວິດໄດ້ໃຫ້ຄຳໝັ້ນສັນຍາໄວ້ກັບລູກຊາຍຂອງຊາອູນ, ໂຈນາທານ.

ເຖິງວ່າຊາອູນບໍ່ຍອມຮັບຄວາມຈົງຮັກພັກດີຂອງດາວິດ. ດາວິດໃຫ້ຄວາມຈົງຮັກພັກດີໜ້າທີ່ຂອງການນຳພາ. ຜູ້ເປັນຜູ້ນຳບາງເວລາກໍມີຂໍ້ຜິດພາດແລະມີຄວາມລົ້ມເຫຼວໃນການຕັດສິນໃຈ. ແຕ່ນັ້ນບໍ່ໄດ້ເຮັດໃຫ້ພວກເຮົາບໍ່ຍອມຮັບໃນອຳນາດແລະຕຳແໜ່ງໜ້າທີ່ຂອງເພິ່ນ. ພວກເຮົາສະແດງຄວາມບໍ່ຈົງຮັກພັກດີຕໍ່ພຣະເຈົ້າໃນເມື່ອພວກເຮົາເລືອກທີ່ຈະບໍ່ຍອມຮັບໃນການນຳພາຂອງລາວ. ດາວິດໃຫ້ຄວາມຈົງຮັກພັກດີກັບຊາອູນເໝືອນເປັນກະສັດໂດຍບໍ່ໄດ້ຄຳນຶງເຖິງຄວາມປອດພັຍຂອງຕົວເອງ.

ດາວິດບໍ່ໄດ້ໄວ້ເນື້ອເຊື່ອໃຈໃນການ “ປ່ຽນໃຈ” ຂອງຊາອູນ. ດັ່ງນັ້ນລາວໄດ້ຂຶ້ນໄປເຖິງປ້ອມຍາມ. ຄວາມບໍ່ໄວ້ເນື້ອເຊື່ອໃຈຂອງດາວິດຕໍ່ຊາອູນໄດ້ປາກົດແຈ້ງໃຫ້ເຫັນໃນເວລານັ້ນ. ຄົນຊາວເມືອງສີເຟໄດ້ບອກຊາອູນວ່າດາວິດພວມລີ້ຢູ່ເທິງພູກີລາແຄມຖິ່ນແຫ້ງແລ້ງກັນດານ. ຊາອູນໄດ້ຄັດເລືອກເອົາທະຫານ 3,000 ຄົນເພື່ອຕິດຕາມຊອກຫາດາວິດໃນທີ່ແຫ້ງແລ້ງກັນດານ. ສະແດງໃຫ້ເຫັນວ່າເມື່ອກ່ອນການຍອມຮັບຂອງລາວແມ່ນບໍ່ມີຜົນຫຍັງເລີຍແຕ່ເປັນການໜ່ວງໜ່ຽວຂອງການທັກຫຼັງ.

**2. <u>ການໃຊ້ຄວາມໄວ້ວາງໃຈ</u>** 1 ຊາມູເອນ 26:7-12

ຂະນະທີ່ຊາອູນໄດ້ຕັ້ງຄ້າຍໃກ້ກັບດາວິດເພື່ອນຳພັຍອັນຕະຣາຍມາໃຫ້ລາວ. ດາວິດໄດ້ສະແດງການຫຍັບເຂົ້າໃກ້ຊາອູນໂດຍທາງກົງກັນຂ້າມ. ດາວິດໄດ້ລວບລວມກຳລັງບຸກລຸກເຂົ້າໄປໃນຄ້າຍຂອງຊາອູນກ່ອນແຈ້ງ. ເພື່ອສະແດງຄວາມຈົງຮັກພັກດີຕໍ່ຊາອູນ. ດາວິດແລະຫຼານຊາຍຂອງລາວ, ອາບີຊັຍຢາ, ໄດ້ເຂົ້າໄປໃນຄ້າຍຂອງຊາອູນໃນເວລາກາງຄືນຊຶ່ງມີທະຫານຮວມທັງໝົດ 3,000 ຄົນ. ດາວິດໄດ້ເຂົ້າໄປຈົນເຖິງຫ້ອງສ່ວນຕົວຂອງຄ້າຍ, ຊຶ່ງເປັນບ່ອນຊາອູນແລະນາຍພົນທະຫານນອນຫລັບຢູ່. ຫອກຂອງຊາອູນກໍວາງຢູ່ຂ້າງໆຂອງກະສັດ(ຫອກແລະເຄື່ອງໝາຍປະຈຳຕຳແໜ່ງແລະອຳນາດສັ່ງການ).

ອາບີຊັຍຢາໄດ້ເຫັນເຫດການເໝືອນກັບວ່າພຣະເຈົ້າໃຫ້ໂອກາດທີ່ຈະເອົາຊະນະຕໍ່ຊາອູນ. ລາວຂັນອາສາທີ່ຈະແທງຊາອູນໃຫ້ຊອດແລະສັນຍາວ່າຈະແທງພຽງແຕ່ບາດດຽວບໍ່ໃຫ້ໄດ້ແທງອີກເປັນເທື່ອທີສອງ. ແຕ່ຢ່າງໃດກໍດີພຣະເຈົ້າຍັງມີແຜນທີ່ດີກວ່ານັ້ນອີກ.

ດາວິດໄດ້ສະແດງຄວາມໄວ້ວາງໃຈຂອງລາວຕໍ່ພຣະເຈົ້າໂດຍການທີ່ບໍ່ແຕະຕ້ອງຄົນທີ່ພຣະເຈົ້າຊົງເຈີມໄວ້ແລ້ວ. ເຖິງແມ່ນວ່າຕົວຂອງດາວິດເອງກໍຖືກພຣະເຈົ້າຊົງເຈີມໄວ້ເໝືອນກັນກໍຕາມ. ດາວິດກໍບໍ່ຢາກກະທຳການນັ້ນດ້ວຍມືຂອງລາວເອງ. ພຣະເຈົ້າເທົ່ານັ້ນທີ່ຈະກະທຳຕໍ່ຊາອູນເອງ. ລາວເວົ້າວ່າ, ພຣະເຈົ້າຈະຊົງເປັນຜູ້ຂ້າລາວເອງ.

ບາງເທື່ອ, ພວກເຮົາໄດ້ພະຍາຍາມກະທຳຫຼາຍຢ່າງດ້ວຍມືຂອງເຮົາເອງ ແທນທີ່ຈະໄວ້ວາງໃຈໃນເວລາຂອງພຣະເຈົ້າຫຼາຍກວ່າ. ດາວິດໄດ້ມີຄວາມແນ່ນອນໃຈວ່າພຣະເຈົ້າໄດ້ສືບຕໍ່ທຳງານໃນການປະພຶດຂອງລາວຢູ່. ແລະປະຕິເສດທີ່ຈະດັດແປງສິ່ງຕ່າງໆດ້ວຍຕົວຂອງລາວເອງ.

ແທນທີ່ຈະຂ້າຊາອູນ, ດາວິດໄດ້ບອກໃຫ້ອາບີຊັຍຢາໃຫ້ເກັບເອົາຫອກແລະຂັນນ້ຳຂອງຊາອູນ. ຄວາມຈິງສິ່ງຂອງເຫຼົ່ານີ້ໄດ້ວາງຢູ່ຂ້າງກະສັດໃນເມື່ອເວລາພຣະອົງນອນລັບຢູ່. ນັ້ນໄດ້ເນັ້ນໃຫ້ເຫັນວ່າດາວິດໄດ້ມີໂອກາດທີ່ຈະຂ້າຊາອູນ. ມັນບໍ່ເປັນການສລາດທີ່ຈະກະທຳດັ່ງນັ້ນ ລາວຕ້ອງການທີ່ຈະໄວ້ວາງໃຈໃນພຣະເຈົ້າຫຼາຍກວ່າ. ການໄວ້ວາງໃຈໃນພຣະເຈົ້າແມ່ນເປັນຄຸນລັກສະນະອັນສຳຄັນຂອງດາວິດ.

ດາວິດໄດ້ເຫັນພຣະຫັດຂອງພຣະເຈົ້າໃນການບຸກເຂົ້າໄປໃນຄ້າຍຂອງຊາອູນໃນເວລາກ່ອນແຈ້ງນັ້ນ. ໜ້າອັສຈັນທີ່ບໍ່ມີຜູ້ໃດເຫັນພວກເຂົາ, ບໍ່ມີຜູ້ໃດຮູ້ແລະບໍ່ມີຜູ້ໃດຕື່ນ. ດາວິດແປຄວາມໝາຍວ່າອັນນີ້ແມ່ນການຊົງບັນດານຂອງພຣະ

ເຈົ້າທີ່ເຮັດໃຫ້ເຂົານອນຫລັບສນິດ. ພຣະເຈົ້າໄດ້ທຳງານຜ່ານການປະພຶດຂອງພວກເຂົາ. ແລະຖ້າວ່າພຣະເຈົ້າໄດ້ທຳງານໃນເຣື່ອງນີ້ແລ້ວ, ລາວກໍຍິ່ງມີຄວາມໄວ້ໃຈອີກວ່າພຣະເຈົ້າກໍຄົງຈະດູແລພາບພົດທີ່ຍິ່ງໃຫຍ່ກວ່ານີ້ອີກ.

3. <u>ລາງວັນຂອງຄວາມຈົງຮັກພັກດີ.</u> 1 ຊາມູເອນ 26: 21-25

ດາວິດໄດ້ຕັ້ງທ່າຢູ່ທ່າງໄກພໍສົມຄວນຈາກຄ້າຍຂອງກະສັດຊາອູນແລະຮ້ອງໃສ່ອັບເນວ່າຫອກແລະຂັນນ້ຳນັ້ນຢູ່ໃສແລ້ວ? ຊາອູນຮູ້ວ່ານັ້ນແມ່ນສຽງຂອງດາວິດຊຶ່ງລາວໄດ້ບຸກລຸກຄ້າຍຂອງຕົນເອງ. ແລະໃນເວລາດຽວກັນນັ້ນຊາອູນໄດ້ສະແດງອອກໃຫ້ເຫັນໃນການກັບໃຈໃໝ່ຂອງລາວ. ໄດ້ຍອມຮັບຕໍ່ດາວິດວ່າເພິ່ນໄດ້ເຮັດໃນສິ່ງທີ່ຜິດແລະຂໍໃຫ້ດາວິດຈົ່ງກັບຄືນມາ, ແລະໄດ້ຮ້ອງດາວິດນັ້ນວ່າເປັນລູກ. ຊາອູນໄດ້ໃຫ້ຄຳໝັ້ນສັນຍາວ່າຈະບໍ່ທຳຮ້າຍດາວິດອີກຕໍ່ໄປເພາະລາວໄດ້ໄວ້ຊີວິດຂອງເພິ່ນ. ຊາອູນໄດ້ຮ້ອງຕົນເອງວ່າເປັນຄົນໂງ່ຈ້າທີ່ສຸດທີ່ໄດ້ກະທຳຕໍ່ຊີວິດຂອງດາວິດ. ດາວິດໄດ້ປະຕິເສດການເຊື້ອເຊີນຂອງຊາອູນ ດາວິດໄດ້ບອກໃຫ້ສິ່ງທະຫານຜູ້ນຶ່ງຂຶ້ນໄປເອົາຫອກຂອງເພິ່ນຄືນໄປ ລາວຈະບໍ່ມາເອົາຫອກດ້ວຍຕົວລາວເອງ ດາວິດຮູ້ຈັກຊີວິດຂອງຊາອູນນັ້ນດີ. ດາວິດກໍຍັງຮູ້ອີກວ່າຄຳສັນຍາຂອງຊາອູນນັ້ນເປັນຄຳສັນຍາທີ່ບໍ່ມີຄວາມໝາຍຊຶ່ງບໍ່ມີຫຍັງເລີຍທີ່ປາກົດໃຫ້ເຫັນເຖິງຄວາມຈິງໃຈໃນການປ່ຽນແປງຂອງລາວ. ດາວິດບໍ່ຍອມຮັກສາຫອກຂອງກະສັດຊາອູນ.

> ບາງຄັ້ງຜູ້ນຳກໍຈະຖືກປົດອອກຈາກການເປັນຜູ້ນຳ, ຢູ່ໃນຄຣິສຕະຈັກກໍອາດຈະມີການແບບນີ້ເກີດຂຶ້ນ. ຖ້າຜູ້ນຳຫາກມີການຂົ່ມຂືນເດັກນ້ອຍຈະບໍ່ສົມຄວນເປັນຜູ້ນຳອີກຕໍ່ໄປ. ຜູ້ນຳທາງຝ່າຍໃຫ້ຄຳປຶກສາຫາກວ່າມີຄວາມສຳພັນທາງເພດກັບຜູ້ທີ່ລາວໃຫ້ຄຳແນະນຳນັ້ນກໍບໍ່ສົມຄວນເປັນຜູ້ນຳອີກຕໍ່ໄປ, ຖ້າມີສະຖານະການແບບນີ້ເກີດຂຶ້ນຄວາມກົດດັນລະຫວ່າງຄຣິສຕະຈັກກັບຜູ້ນຳຈະບໍ່ຮຸນແຮງ. ສະຖານະການແບບນີ້ ທາງທີ່ດີທີ່ສຸດນັ້ນຄືການອະທິຖານແລະໃຫ້ຄວາມຈົງຮັກພັກດີຕໍ່ສິດທິແລະຣິດອຳນາດຂອງພຣະເຈົ້າ.

ເມື່ອຜູ້ນຳເຮັດສິ່ງທີ່ເສື່ອມເສັຽ, ຂ້າພຣະເຈົ້າຕ້ອງເຮັດແນວໃດ?

- ໃຊ້ເວລາໃນການອະທິຖານ, ແລະຊອກສແວງຫາການຊົງນຳຂອງພຣະເຈົ້າ.
- ບໍ່ຍອມຟັງຄວາມຊຸບຊິບນິນທາ ຊອກສແວງຫາຄວາມຈິງ.
- ຕິດຕາມກົດລະບຽບຂອງຄຣິສຕະຈັກທີ່ຕັ້ງຂຶ້ນຢ່າງໃກ້ຊິດ.
- ໃຊ້ກົດໝາຍທ້ອງຖິ່ນຂອງຣັດແລະຂອງຣັຖບານ.
- ຊອກຫາຄວາມຄິດເຫັນຈາກຜູ້ນຳໃນຄຣິສຕະຈັກ.
- ໃຫ້ໂອກາດຜູ້ທຳຜິດຖິ້ມໃຈເກົ່າເອົາໃຈໃໝ່ແລະກັບຄືນສູ່ສະພາບເດີມ.
- ສເນີໃຫ້ມີໂອກາດກັບຄືນດີກັນ.
- ຈັດຫາຄວາມຊ່ວຍເຫຼືອອັນເໝາະສົມຕໍ່ຜູ້ທຳຜິດ.
- ເຮັດທຸກສິ່ງຢ່າງເພື່ອນຳກຽດຕິຍົດແລະສະງ່າຣາສີມາສູ່ພຣະເຈົ້າ.

ຄຳເວົ້າສຸດທາຍຂອງຊາອູນເປັນຄຳອວຍພອນດາວິດ. ລາວໄດ້ເວົ້າວ່າຂໍໃຫ້ພຣະຜູ້ເປັນເຈົ້າອວຍພອນເຈົ້າເຖີດ. ເຈົ້າຈະປະສົບຜົນສຳເຣັດໃນທຸກສິ່ງທີ່ເຈົ້າກະທຳ ຫຼັງຈາກນັ້ນຊາອູນກໍບໍ່ເວົ້າກັບດາວິດອີກ, ຈະເບິ່ງເຫັນໄດ້ວ່າຄຳເວົ້າຂອງຊາອູນບໍ່ມີຄວາມໝາຍເພາະບໍ່ມີອັນໃດຈະສນັບສນຸນຄຳເວົ້າຂອງລາວໃຫ້ເຊື່ອຖືໄດ້. ແລະດາວິດກໍບໍ່ຖືຄຳເວົ້ານັ້ນເປັນຈິງ, ລາວຈຶ່ງຈາກໄປຕາມທາງຂອງລາວແລະຊາອູນກໍກັບເມືອວັງຂອງຕົນ. ພຣະເຈົ້າພໍພຣະທັຍນຳດາວິດໃນຄວາມຈົງຮັກພັກດີ, ແຕ່ບໍ່ພໍພຣະທັຍນຳການກະທຳຂອງຊາອູນຄືບໍ່ມີຄວາມຈົງຮັກພັກດີຕໍ່ພຣະເຈົ້າ.

## ບົດຮຽນແຫ່ງຊີວິດ:

ຄວາມຈິງຮັກພັກດີຕໍ່ພຣະເຈົ້ານັ້ນສຳຄັນ ເຖິງແມ່ນເປັນຄວາມຕາຍສຳລັບຜູ້ນຳ. ພຣະເຈົ້າຕ້ອງການຄວາມໄວ້ວາງໃຈໃນພຣະອົງແລະຖ້ອຍຄຳຂອງພຣະອົງ. ໃນເມື່ອຜູ້ນຳຫາກບໍ່ມີຄວາມຈິງຮັກພັກດີຕໍ່ພຣະອົງ. ຊີວິດຂອງເຂົາຈະປະເຊີນກັບການລົງໂທດຈາກພຣະເຈົ້າ.ໃນເວລາເຂົາພະເນຈອນຢູ່ນັ້ນເຂົາກໍຄວນໄດ້ຮັບກຽດຈາກຜູ້ຕິດຕາມເຂົາ, ແລະຜູ້ນຳຈະຕັ້ງໝັ້ນຢູ່ຫຼືລົ້ມລົງກໍຂຶ້ນຢູ່ກັບອຳນາດສູງສຸດໃນການປົກຄອງຂອງພຣະເຈົ້າ ບາງຄັ້ງຄວາມບາບຂອງຜູ້ນຳໄດ້ກະທຳນັ້ນມັນໃຫຍ່ຈົນເກີນສ່ວນແລະເຂົາຈະຕ້ອງຖືກປົດອອກຈາກການເປັນຜູ້ນຳໃນທັນທີທັນໃດ, ແຕ່ໃນສະຖານະການດັ່ງນີ້ສິ່ງທີ່ຖືກຕ້ອງກໍຄືຄວາມອົດທົນແລະໄວ້ວາງໃຈໃນພຣະອົງຕໍ່ການຊົງປ່ຽນຜູ້ນຳຈະປາກົດຂຶ້ນ.

ເຮົາໄດ້ຮຽນຮູ້ຫຍັງແດ່ຈາກປະສົບການຂອງດາວິດແລະຊາອູນທີ່ຈະເຮັດໃຫ້ພວກເຮົາເປັນຜູ້ຮັບໃຊ້ທີ່ດີແລະນຳສະງ່າຣາສີມາສູ່ພຣະເຈົ້າ.

- ມີບາງຄົນໄດ້ໃຫ້ຄຳໝັ້ນສັນຍາວ່າຈະຈິງຮັກພັກດີຕໍ່ພຣະເຈົ້າແລະຕໍ່ຜູ້ອື່ນ, ແຕ່ຄຳເວົ້າຂອງເຂົານັ້ນເປັນຄຳເວົ້າທີ່ບໍ່ມີຄວາມໝາຍເປັນຄຳເວົ້າເປົ່າໆ.
- ສລາດເໝືອນງູແລະອ່ອນສຸພາບເໝືອນນົກເຂົາ" (ມັດທາຍ 10:16).
- ເຮົາສາມາດໄວ້ວາງໃຈໃນພຣະອົງທີ່ຍົກລະດັບເຮົາຂຶ້ນ ຢ່າງດຽວກັນກັບພຣະອົງຕ້ອງການໃຫ້ເຮົາມີຄວາມສັດຊື່ຕໍ່ພຣະອົງ.
- ພຣະເຈົ້າເຫັນຄວາມຈິງຮັກພັກດີຂອງເຮົາທີ່ມີຕໍ່ພຣະອົງແລຕໍ່ຜູ້ອື່ນແລ້ວພຣະອົງຈະໃຫ້ລາງວັນເຮົາຍ້ອນຄວາມສັດຊື່ແລະຕິດຕາມນ້ຳພຣະທັຍຂອງພຣະເຈົ້າ.
- ລາງວັນທີ່ພຣະເຈົ້າເອົາໃຫ້ຍ້ອນຄວາມສັດຊື່ແລະຄວາມຈິງຮັກພັກດີຂອງເຮົານັ້ນຈະບໍ່ໄດ້ຮັບຢ່າງກະທັນຫັນ; ບາງຄັ້ງອາດຈະເປັນປີເຮົາຈິ່ງໄດ້ຮັບປະສົບການນັ້ນຫຼັງຈາກພວກເຮົາໄດ້ຕັດສິນໃຈຕາມນ້ຳພຣະທັຍຂອງພຣະເຈົ້າແລ້ວ, ໂດຍສະເພາະແລ້ວເປັນສະຖານະການພິເສດ, ພວກເຮົາບໍ່ຄວນຈະຊັກຊ້າຕ້ອງປະຕິບັດທັນທີ,

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.